ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ການນຳຂອງ ທຫລ ແລະ ການນຳຂອງແຂວງຈຳປາສັກ ພົບປະ ແລະ ເຮັດວຽກຮ່ວມກັນ



ທ່ານ ນ. ວັດທະນາ ດາລາລອຍ, ກຳມະການປະຈຳພັກ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ພົບປະຫາລື ແລະ ເຮັດວຽກຮ່ວມກັບ ທ່ານ ປອ. ວິໄລວົງ ບຸດດາຄຳ ກຳມະການສູນກາງພັກ, ເລຂາພັກແຂວງ ເຈົ້າແຂວງແຂວງຈຳປາສັກ ພ້ອມດ້ວຍຄະນະ ແລະ ການເຂົ້າຮ່ວມຂອງຄະນະນຳທັງສອງຝ່າຍ ເຊິ່ງຈັດຂຶ້ນຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ VI ສຳນັກງານ ທຫລ ນະຄອນຫລວງວຽງຈັນ ໃນຕອນບ່າຍຂອງວັນທີ 12 ພຶດສະພາ 2022.

ທ່ານຮອງຜູ້ວ່າການ ທຫລ ໄດ້ກ່າວວ່າ: ປັດຈຸບັນພວກເຮົາກຳລັງປະເຊີນບັນຫາຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຫຼາຍດ້ານ ເປັນຕົ້ນ: ❶ ການແຜ່ລະບາດຂອງພະຍາດ Covid-19, ❷ ການເພີ່ມຂຶ້ນສູງຂອງລາຄານ້ຳມັນຢູ່ຕະຫຼາດສາກົນ, ການຜັນຜວນລາຄາຄຳ, ຄ່າເງິນສະກຸນຫຼັກຢູ່ຕະຫຼາດສາກົນແຂງຄ່າຂຶ້ນ ຈາກຄວາມຂັດແຍ່ງລະຫວ່າງ ອູແກຣນ ແລະ ລັດເຊຍເຮັດໃຫ້ການຮັກສາສະຖຽລະພາບເງິນຕາແຫ່ງຊາດປະສົບກັບບັນຫາຫຼາຍດ້ານ ເຊັ່ນ: ອັດຕາເງິນເຟີ້ມີທ່າອ່ຽງເພີ່ມຂຶ້ນ, ອັດຕາແລກປ່ຽນກີບທຽບໃສ່ເງິນໂດລາ ແລະ ທຽບໃສ່ເງິນບາດຍັງສືບຕໍ່ມີທ່າອ່ຽງອ່ອນຄ່າ ແລະ ສະພາບຄວາມຕ້ອງການເງິນຕາຕ່າງປະເທດໃນການຊຳລະກັບຕ່າງປະເທດຂອງ ສປປ ລາວ ຍັງຢູ່ໃນລະດັບສູງ ແຕ່ເຖິງຢ່າງໃດກໍ່ຕາມ: ທຫລ ແມ່ນໄດ້ເອົາໃຈໃສ່ ແລະ ຍົກສູງຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນດ້ານສະຖຽລະພາບເງິນຕາແຫ່ງຊາດ ໂດຍໄດ້ຄົ້ນຄວ້າ-ປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເຊິ່ງຄາດວ່າຈະໄດ້ເຂົ້າຜ່ານກອງປະຊຸມສະພາແຫ່ງຊາດໃນເດືອນ ມິຖຸນາ 2022, ສືບຕໍ່ຮັກສາສະຖຽລະພາບດ້ານການເງິນ ແລະ ການຄຸ້ມຄອງລະບົບຊຳລະສະສາງຢ່າງຕັ້ງໜ້າ. ການພົບປະ ແລະ ເຮັດວຽກຮ່ວມກັນໃນຄັ້ງນີ້ ພວກເຮົາຈະໄດ້ຮັບຟັງການລາຍງານ ແລະ ແລກປ່ຽນຄຳເຫັນ ໃນບັນຫາ ❶ ສະພາບພົ້ນເດັ່ນຂອງ ແຂວງຈຳປາສັກ ແລະ ການ ເຄື່ອນໄຫວວຽກງານຂອງ ທຫລ; ❷ ສະພາບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ເປັນຕົ້ນ: ການຄຸ້ມຄອງເງິນຕາຕ່າງປະເທດຈາກການສົ່ງອອກຜະລິດຕະພັນກະສິກຳ, ການສະໜອງທຶນໃສ່ SME ແລະ ການສະໜອງທຶນເພື່ອສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ. ຕະຫຼອດໄລຍະຜ່ານມາ, ທຫລ ໄດ້ເອົາໃຈໃສ່ໃນການເປັນເຈົ້າການປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2021-2025) ຄັ້ງທີ IX ແລະ ການຈັດຕັ້ງປະຕິບັດ

ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ (2021-2023) ໂດຍການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດບັນດານະໂຍບາຍຕ່າງໆ ເປັນຕົ້ນ: 1) ນະໂຍບາຍສິນເຊື່ອເພື່ອສົ່ງ ເສີມການຜະລິດ: ສິນເຊື່ອເພື່ອສົ່ງອອກໄຟ ຟ້າ, ສິນເຊື່ອເພື່ອຜະລິດສິນຄ້າທົດແທນການນໍາເຂົ້າ ແລະ ສົ່ງອອກ ດ້ວຍການຊຸກຍູ້ປັບປຸງກົນໄກການເຂົ້າເຖິງແຫຼ່ງທຶນຂອງ (SMEs) ໃຫ້ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງສະດວກ ແລະ ວ່ອງໄວກວ່າເກົ່າ.



ທ່ານ ປອ. ວິໄລວົງ ບຸດດາຄໍາ ເຈົ້າແຂວງແຂວງຈໍາປາສັກ ໄດ້ໃຫ້ຮູ້ຕື່ມອີກວ່າ: ການເຄື່ອນໄຫວຮ່ວມເຮັດວຽກໃນຄັ້ງນີ້ ແມ່ນເປັນຄັ້ງທໍາອິດ ຂອງແຂວງຈໍາປາສັກ ແລະ ທຫລ ຈຸດປະສົງຕົ້ນຕໍ ເພື່ອປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກໍຄືການຊ່ວຍໜູນຊຸກຍູ້ຂອງ ທຫລ, ການຊຸກຍູ້ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຄື: ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ພ້ອມນັ້ນ, ພ້ອມທັງປຶກສາຫາລືໃນການຈັດຕັ້ງດ້ານວຽກງານວິຊາສະເພາະໃນຂົງເຂດທະນະຄານ ແລະ ກ້າວໄປເຖິງການເຊັນບົດບັນທຶກການຮ່ວມມື ລະຫວ່າງທະນະຄານແຫ່ງ ສປປ ລາວ ແລະ ແຂວງຈໍາປາສັກ. ແຂວງຈໍາປາສັກໄດ້ສູ້ຊົນນໍາພາຜັນຂະຫຍາຍ-ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ຂອງແຂວງ ຕິດພັນກັບການປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຮັດໃຫ້ເສດຖະກິດຂອງແຂວງສືບຕໍ່ຂະຫຍາຍຕົວດີຂຶ້ນລວມຍອດຜະລິດຕະພັນພາຍໃນ (GDP) ປະຕິບັດໄດ້ທັງໝົດ 22.700 ຕື້ກີບ, ທຽບໃສ່ແຜນປີໄດ້ 97%, ອັດຕາການຂະຫຍາຍຕົວຂອງ GDP ຢູ່ໃນລະດັບ 3,58%, ສະເລັ່ຍຕໍ່ຫົວຄົນໄດ້ 3.050 ໂດລາສະຫະລັດຕໍ່ຄົນ. ທ້າຍສຸດນີ້, ຂໍອວຍພອນໄຊອັນປະເສີດມາຍັງ **ທ່ານ ນາງ ວັດທະນາ ດາລາລອຍ** ກໍາມະການປະຈໍາພັກ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຈົ່ງມີສຸຂະພາບເຂັ້ມແຂງ, ມີພາລະນາໄມສົມບູນ, ມີຄວາມຜາສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ ແລະ ມີຜົນສໍາເລັດໃນໜ້າທີ່ວຽກງານອັນມີກຽດສະຫງ່າຂອງຕົນ, ອວຍພອນແດ່ ຄະນະນໍາຂອງທະນາຄານແຫ່ງ ສປປ ລາວ ຈົ່ງມີສຸຂະພາບເຂັ້ມແຂງ, ມີພາລະນາໄມສົມບູນ ແລະ ປະສົບຜົນສໍາເລັດໃນໜ້າທີ່ວຽກງານຂອງຕົນທຸກປະການ.

#ຂ່າວ ແລະ ພາບໂດຍ: ນ. ປາໃນ ພັນທະລາ

ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ